# ມິຊຊາອາທິດທີ 34 ກຳນົດທຳມະດາ ປີ B

## ວັນອາທິດທີ 25 ພະຈິກ 2018

## ສະຫລອງພຣະກຣິສໂຕກະສັດ



**ພຣະວໍລະສານໂດຍນັກບຸນຍວງ 18, 33-37**

ເມື່ອເວລາພຣະເຢຊູເຈົ້າປາກົດຕໍ່ໜ້າປີລາໂຕ, ປີລາໂຕທູນຖາມພຣະອົງວ່າ: ທ່ານແມ່ນກະສັດຂອງພວກຢູເດວບໍ? ພຣະເຢຊູເຈົ້າກ່າວຕອບວ່າ: ທ່ານເວົ້າຄວາມນີ້ດ້ວຍຕົວທ່ານເອງບໍ ຫລືໄດ້ຍິນຄົນອື່ນເວົ້າກັບທ່ານເຖິງຕົວເຮົາກ່ອນແລ້ວ? ປີລາໂຕຕອບວ່າ: ເຮົານີ້ແມ່ນຄົນຊາດຢູເດວບໍ? ແມ່ນຄົນຊາດຂອງທ່ານເອງແລະພວກຫົວໜ້າສົງມອບທ່ານໃຫ້ເຮົາ. ດັ່ງນີ້ທ່ານໄດ້ທຳສິ່ງໃດ?

ພຣະເຢຊູເຈົ້າກ່າວຕອບວ່າ: ອານາຈັກຂອງເຮົາບໍ່ຢູ່ໃນແຜ່ນດິນນີ້ດອກ. ຖ້າວ່າອານາຈັກຂອງເຮົາຢູ່ໃນໂລກນີ້ ບ່າວໄພ່ຂອງເຮົາກໍຈະພາກັນຕໍ່ສູ້ເພື່ອບໍ່ໃຫ້ເຮົາຕ້ອງຕົກໃນມືຂອງພວກຢູເດວເປັນອັນຂາດ. ແຕ່ວ່າອານາຈັກຂອງເຮົາບໍ່ແມ່ນຢູ່ໃນໂລກນີ້.

ປີລາໂຕເລີຍຖາມຊ້ຳອີກວ່າ: ດັ່ງນັ້ນທ່ານແມ່ນກະສັດບໍ? ພຣະເຢຊູເຈົ້າກ່າວຕອບວ່າ: ແມ່ນຄືທ່ານເວົ້າ. ເຮົາແມ່ນກະສັດ. ເຮົາເກີດມາແລະໄດ້ມາໃນໂລກນີ້ເພື່ອເປັນຫລັກຖານພິຍານເຖິງຄວາມຈິງ. ຜູ້ໃດຢູ່ໃນຄວາມຈິງ ຜູ້ນັ້ນກໍຟັງສຽງຂອງເຮົາ. ປີລາໂຕເລີຍຖາມວ່າ: ຄວາມຈິງແມ່ນຫຍັງ?

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ຢງ 18, 33-37**

ວັນນີ້ເປັນວັນອາທິດສຸດທ້າຍຂອງປີພິທີກໍາ B ເປັນວັນທີ່ພຣະກຣິສຕະຈັກເຊີນຊວນພວກເຮົາໃຫ້ຄຶດພິດຈາລະນາເຖິງບັ້ນປາຍຊີວິດຂອງພວກເຮົາຢູ່ໃນແຜ່ນດິນນີ້ວ່າພວກເຮົາໄດ້ໃຊ້ຊີວິດໃນປີໜຶ່ງທີ່ຜ່ານມາຢ່າງໃດ?ແລະໃນເວລາດຽວກັນພວກເຮົາໄດ້ກຽມພ້ອມຫລືຍັງສໍາລັບຈຸດໝາຍປາຍທາງຊີວິດຂອງພວກເຮົາກັບພຣະເຈົ້າໃນອານາຈັກຂອງພຣະອົງ?

ໃນບັນຍາກາດແຫ່ງການກະກຽມແລະຕື່ນເຝົ້າເພື່ອລໍຖ້າວັນທີ່ພຣະກຣິສໂຕເຈົ້າຈະສະເດັດກັບມາອີກຄັ້ງໜຶ່ງໃນສີມຸງຄຸນຂອງພຣະອົງ, ພຣະກຣິສຕະຈັກສະຫລອງພຣະກຣິສໂຕກະສັດແຫ່ງໂລກຈັກກະວານ. ວັນສະຫລອງນີ້ມີຄວາມໝາຍຢ່າງໃດ? ການທີ່ພຣະເຢຊູເຈົ້າເປັນກະສັດໝາຍເຖິງພຣະອົງເປັນຜູ້ມີອໍານາດສູງສົ່ງ ພຣະອົງມາເພື່ອຜາບແພ້ໂລກຈັກກະວານບໍ? ກະສັດອົງນີ້ມາໃນໂລກເພື່ອຕັດສິນໂລກບໍ? ພຣະອົງມາເພື່ອເປັນນາຍຄົນອື່ນບໍ? ພວກເຮົາຈະພົບກັບຄໍາຕອບຂອງຄໍາຖາມເຫລົ່ານີ້ຢູ່ໃນວາຈາຂອງພຣະເຈົ້າຊຶ່ງພວກເຮົາໄດ້ຟັງໃນວັນນີ້.

ສິ່ງທໍາອິດທີ່ພວກເຮົາເຫັນໄດ້ໃນວາຈາຂອງພຣະເຈົ້າຄື ພຣະເຢຊູເຈົ້າກໍາລັງຖືກສອບສວນແລະຕັດສິນຈາກປີລາໂຕ. ແລະປີລາໂຕກໍຖາມພຣະເຢຊູເຈົ້າເຖິງສອງຄັ້ງວ່າ: ພຣະອົງແມ່ນກະສັດຂອງພວກຢູເດວບໍ? ພຣະເຢຊູເຈົ້າກໍຢືນຢັນຕໍ່ໜ້າປີລາໂຕວ່າ: ພຣະອົງແມ່ນກະສັດແທ້. ແຕ່ອານາຈັກຂອງພຣະອົງບໍ່ໄດ້ຢູ່ໃນແຜ່ນດິນນີ້. ແລະພຣະອົງມາບໍ່ແມ່ນເພື່ອເປັນນາຍແລະຕັດສິນຄົນອື່ນ. ເພາະຖ້າພຣະອົງມາເພື່ອຜາບແພ້ໂລກ ພຣະອົງກໍຈະສົ່ງກໍາລັງທະຫານຂອງພຣະອົງມາເພື່ອທໍາລາຍແຜ່ນດິນ ແລະພຣະອົງເອງກໍຈະບໍ່ຖືກຈັບແລະຖືກສອບສວນຈາກປີລາໂຕ. ແຕ່ຍ້ອນພຣະອົງມາໃນໂລກນີ້ເພື່ອເປັນພິຍານເຖິງຄວາມຈິງ. ແລະຄວາມຈິງນີ້ບໍ່ແມ່ນທິດສະດີຫລືກົດເກນທີ່ມາຈາກມະນຸດ ແຕ່ຄວາມຈິງນີ້ຄືພຣະບິດາເຈົ້າສະຫວັນນັ້ນເອງ. ພຣະເຢຊູເຈົ້າມາໃນໂລກນີ້ເພື່ອເປັນພິຍານເຖິງຄວາມຮັກຂອງພຣະບິດາເຈົ້າທີ່ມີຕໍ່ມະນຸດ ແລະເປັນຕົ້ນຕໍ່ມະນຸດຜູ້ໄດ້ກະທໍາຜິດແລະຕົກຢູ່ໃນບາບ, ຢູ່ໃນຄວາມຕາຍ. ແລະຍ້ອນການເປັນພິຍານເຖິງຄວາມຈິງນີ້ ພຣະເຢຊູເຈົ້າຈຶ່ງຕ້ອງຖືກຕັດສິນ, ຖືກທໍລະມານແລະຕາຍປານຄົນໂທດເທິງໄມ້ກາງເຂນ ແຕ່ວັນທີສາມພຣະອົງຈະກັບເປັນຄືນມາ. ຜູ້ໃດເຊື່ອແລະກັບມາຫາພຣະອົງຈະໄດ້ຮັບຄວາມຣອດ ອັນແມ່ນຊີວິດນິລັນດອນ. ນີ້ແລແມ່ນຄວາມໝາຍແລະຈຸດປະສົງຂອງການເປັນກະສັດຂອງພຣະເຢຊູເຈົ້າ.

ສ່ວນພວກເຮົາຜູ້ເປັນລູກຂອງພຣະບິດາເຈົ້າສະຫວັນ, ພວກເຮົາໄດ້ຮັບຮູ້ວ່າພຣະເຢຊູເຈົ້າເປັນກະສັດຂອງພວກເຮົາບໍ? ພວກເຮົາໄດ້ໃຫ້ພຣະອົງນໍາພາພວກເຮົາໄປຫາພຣະບິດາເຈົ້າບໍ? ຫລືພວກເຮົາມີກະສັດອົງອື່ນໃນຊີວິດຂອງພວກເຮົາ? ຫລືພວກເຮົາໃຫ້ອໍານາດເງິນຄໍາແລະຄວາມຈະເລີນກ້າວໜ້າຂອງໂລກມາເປັນກະສັດຂອງພວກເຮົາບໍ? ຂໍໃຫ້ວາຈາຂອງພຣະເຈົ້າໃນວັນນີ້ຊ່ວຍເຕືອນສະຕິແລະຈິດໃຈພວກເຮົາໃຫ້ຫັນມາຫາພຣະເຢຊູເຈົ້າຜູ້ເປັນທັງກະສັດແລະຜູ້ຮັບໃຊ້ ເພື່ອພາພວກເຮົາໄປຫາຄວາມຈິງຄືພຣະບິດາເຈົ້າສະຫວັນນັ້ນເທີ້ນ. ອາແມນ

ຄຸນພໍ່ ອົງຕອນ ກຽດຕິສັກ